**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງ ຄຳມ່ວນ

ເລກທີ.໐໘..../ສພຂ.ຄມ

ຄຳມ່ວນ, ວັນທີ.໒໔.ເມສາ..2025

# ມະຕິ

## ຮັບຮອງເອົາ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄຳມ່ວນ ວ່າດ້ວຍ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນ ແຂວງຄຳມ່ວນ.

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ(ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຜັງເມືອງ (ສະບັບປັບປຸງ) ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ໜັງສືສະເໜີ ຂອງເຈົ້າແຂວງ ຄຳມ່ວນ ເລກທີ 02/ຈຂ, ລົງວັນທີ 3 ມັງກອນ 2025.

ຜ່ານການຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຄຳມ່ວນ ຊຸດທີ II ກ່ຽວກັບເນື້ອໃນ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄຳມ່ວນ ວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນ ແຂວງຄຳມ່ວນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຄຳມ່ວນ ຊຸດທີ II.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄຳມ່ວນ ວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນ ແຂວງຄຳມ່ວນ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**ມາດຕາ 2** ການຈັດຕັ້ງປະຕິບັດ

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ສະພາປະຊາຊົນແຂວງ ຄຳມ່ວນ**

**ປະທານ**

ບຸນມີ ພິມມະສອນ

- ບ່ອນສົ່ງ :

ທ່ານ ເຈົ້າແຂວງ ຄຳມ່ວນ ຈຳນວນ 1 ສະບັບ
ເກັບຮັກສາໄວ້ ຈຳນວນ 1 ສະບັບ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຄຳມ່ວນ

ເລກທີ...918...../ຈຂ

ຄຳມ່ວນ, ວັນທີ 29 ພຶດສະພາ 2025

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນແຂວງຄຳມ່ວນ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ການຜັງເມືອງ (ສະບັບປັບປຸງ) ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ກົດໝາຍ ວ່າດ່ວຍການສ້າງນິຕິກຳ(ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິ ຂອງສະພາປະຊາຊົນແຂວງ ຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນແຂວງຄຳມ່ວນ ສະບັບເລກທີ 08/ສພຂ.ຄມ, ລົງວັນທີ 24 ເມສາ 2025.

### ເຈົ້າແຂວງ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນລະບົບ ແລະ ມີປະສິດທິຜົນ ແນ່ໃສ່ຮັບປະກັນການຄຸ້ມຄອງ ແລະ ພັດທະນາຕົວເມືອງ ໃຫ້ມີຄວາມສວຍງາມ, ສະດວກ, ເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ, ມີສຸຂະອານາໄມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາຕົວເມືອງ ຕິດພັນກັບການເຄື່ອນໄຫວສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຄຳມ່ວນ.

**ມາດຕາ 2: ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແມ່ນການປັບປຸງແກ້ໄຂພາຍໃນຕົວເມືອງ ໃຫ້ຖືກຕ້ອງຕາມມາດຕະຖານທາງດ້ານບໍລິຫານ, ເຕັກນິກ, ວິທະຍາສາດ, ເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນລະບົບ ໃຫ້ສອດຄ່ອງກັບແຜນຜັງຕົວເມືອງ ທີ່ລະບຽບກົດໝາຍໄດ້ກຳນົດໄວ້.

**ມາດຕາ 3: ອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການຈັດສັນ ໝາຍເຖິງ ການຈັດວາງ ຫຼື ແກ້ໄຂ ສິ່ງທີ່ຂັດກັບກົດໝາຍ ແລະ ລະບຽບການ;

2. ການຈັດສັນຄວາມເປັນລະບຽບຮ້ອຍໃນຂະແໜງໂຍທາທິການ ແລະ ຂົນສົ່ງ ໝາຍເຖິງ ການວາງແຜນຜັງ, ການກໍ່ສ້າງ ແລະ ສ້ອມແປງຕຶກອາຄານ, ການກໍ່ສ້າງເສັ້ນທາງ, ການກໍ່ສ້າງຄອງລະບາຍນໍ້າ, ການຈົກ ແລະຖົມດິນ, ມ້າງສິ່ງຕໍ່ເຕີມການກໍ່ສ້າງ ທີ່ບໍ່ຖືກຕ້ອງກັບແຜນຜັງການປຸກສ້າງ, ຮື້ຖອນປ້າຍໂຄສະນາທຸກຊະນິດ ທີ່ຕິດຕັ້ງບໍ່ຖືກມາດຕະຖານ-ເຕັກນິກ, ການຈອດລົດຊະຊາຍ, ຍົກຍ້າຍສິ່ງກີດຂວາງຕາມທາງຄົນຍ່າງ ແລະ ຕາມເຂດສາທາລະນະ ລວມເຖິງການນໍາໃຊ້ພື້ນທີ່ເສັ້ນທາງ ເພື່ອການຈັດກິດຈະກໍາທາງສັງຄົມ ໃຫ້ຖືກຕ້ອງຕາມລະບຽບການ;

3. ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຂະແໜງອຸດສາຫະກໍາ ແລະ ການຄ້າ ໝາຍເຖິງ ການເຮັດໃຫ້ ໂຮງງານ, ສູນການຄ້າ, ຕະຫຼາດ, ຮ້ານຄ້າ ແລະ ສະຖານທີ່ຊື້-ຂາຍອື່ນໆ ຖືກຕ້ອງຕາມມາດຕະຖານທີ່ກໍານົດ;

4. ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໝາຍເຖິງ ການປຸກສ້າງສະຖານທີ່ບັນເທີງ ຕ້ອງໃຫ້ໄດ້ຕາມລະບຽບການ ແລະ ມາດຕະຖານ-ເຕັກນິກ ທີ່ທາງກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໄດ້ກໍານົດ;

5. ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງພະລັງງານ ແລະ ບໍ່ແຮ່ ໝາຍເຖິງ ລະບົບສາຍໄຟຟ້າ ທີ່ເກາະຫ້ອຍຕາມເສົາໄຟຟ້າ ຂາດຄວາມເປັນລະບົບລະບຽບ, ຂາດມາດຕະຖານເຕັກນິກ ແລະ ບໍ່ຮັບປະກັນດ້ານຄວາມປອດໄພ;

6. ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ໝາຍເຖິງ ການຕິດຕັ້ງເສົາຮັບ-ສົ່ງສັນຍາ, ລະບົບສາຍໂທລະສັບ ທີ່ເກາະຫ້ອຍຕາມເສົາໄຟຟ້າ, ຂາດຄວາມເປັນລະບົບລະບຽບ ແລະ ບໍ່ຮັບປະກັນຄວາມປອດໄພ;

7. ສິ່ງກີດຂວາງໃນເສັ້ນທາງ ໝາຍເຖິງ ວັດຖຸສິ່ງຂອງ, ສິ່ງຕິດຕັ້ງ-ປຸກສ້າງ, ກິດຈະການ ແລະ ກິດຈະກໍາທີ່ກີດຂວາງ ເຮັດໃຫ້ມີການສັນຈອນຫຍຸ້ງຍາກຕິດຂັດ ໃນໄລຍະຊົ່ວຄາວ ຫຼື ຖາວອນ ຢູ່ຕາມແລວທາງຄົນຍ່າງ ແລະ ເສັ້ນທາງຫຼວງທຸກປະເພດ;

8. ຕົວເມືອງ ໝາຍເຖິງ ພື້ນທີ່ທີ່ມີປະຊາກອນໜາແໜ້ນ ປະກອບອາຊີບຢູ່ໃນຂົງເຂດອຸດສາຫະກໍາ, ການຄ້າ ແລະ ບໍລິການ ເປັນສ່ວນຫຼາຍ ແລະ ມີໂຄງລ່າງພື້ນຖານທາງດ້ານເຕັກນິກ, ເສດຖະກິດ-ສັງຄົມ;

9. ເທສະການ ໝາຍເຖິງ ການຈັດງານບຸນປະເພນີ ແລະ ງານສະເຫຼີມສະຫຼອງ ປະຈໍາຊາດ ຫຼື ທ້ອງຖິ່ນ;

10. ອົງການປົກຄອງທ້ອງຖິ່ນຂັ້ນຕໍ່າສຸດ ແມ່ນອົງການປົກຄອງທ້ອງຖິ່ນຂອງລັດ ທີ່ມີຜູ້ບໍລິຫານໄດ້ຮັບເງິນເດືອນຂອງລັດ.

**ມາດຕາ 4: ຫຼັກການ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາ ແລະ ລະບຽບການ ຂອງຂະແໜງການ ທີ່ໄດ້ປະກາດໃຊ້ ແລະ ມີຜົນສັກສິດແລ້ວ;

2. ສອດຄ່ອງກັບ ແຜນຜັງຕົວເມືອງ, ເສັ້ນທາງ, ເຂດນໍາໃຊ້ທີ່ດິນ ທີ່ໄດ້ກໍານົດໄວ້;

3. ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ເທົ່າທຽມກັນຕໍ່ໜ້າກົດໝາຍ ຂອງສັງຄົມ ແລະ ຊຸມຊົນ ໃນຕົວເມືອງ;

4. ຮັບປະກັນໃຫ້ສັງຄົມ ມີຄວາມສາມັກຄີປອງດອງ, ມີຄວາມສະຫງົບ, ມີຄວາມສະດວກ ແລະ ປອດໄພ.

**ມາດຕາ 5: ນະໂຍບາຍຂອງລັດ**

ລັດ ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ວຽກງານການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ດ້ວຍການມີສ່ວນຮ່ວມ, ສະໜັບສະໜູນ ເພື່ອເຮັດໃຫ້ຕົວເມືອງໃນທົ່ວແຂວງຄຳມ່ວນ ເປັນຕົວເມືອງທີ່ສະອາດງາມຕາ, ສະຫງົບ-ປອດໄພ, ສະພາບແວດລ້ອມທີ່ດີ, ມີລະບຽບວິໄນ, ມີຄວາມສີວິໄລ ແລະ ໜ້າຢູ່.

**ມາດຕາ 6: ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ພາຍໃນແຂວງຄຳມ່ວນ.

## ໝວດທີ II

## ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ

**ມາດຕາ 7: ຂະແໜງການເປົ້າໝາຍໃນການຈັດສັນ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໄລຍະປະຈຸບັນ ສຸມໃສ່ຂະແໜງການຕ່າງໆ ຄື:

1. ຂະແໜງໂຍທາທິການ ແລະ ຂົນສົ່ງ;
2. ຂະແໜງອຸດສະຫະກຳ ແລະ ການຄ້າ;
3. ຂະແໜງພະລັງງານ ແລະ ບໍ່ແຮ່;
4. ຂະແໜງເຕັກໂນໂລຊີ ແລະ ການສື່ສານ;
5. ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
6. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
7. ຂະແໜງກະສິກຳ ແລະ ປ່າໄມ້;
8. ຂະແໜງການອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 8: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງໂຍທາທິການ ແລະ ຂົນສົ່ງ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງໂຍທາທິການ ແລະ ຂົນສົ່ງ ມີດັ່ງນີ້:

1. ການຈັດສັນສາທາລະນະປະໂຫຍດ ແລະ ສິ່ງອຳນວຍການຈະລາຈອນ ຂອງລັດ

- ແກ້ໄຂການແລ່ນລົດບັນທຸກ ຕາມເສັ້ນທາງເຂົ້າ-ອອກໃນຕົວເມືອງ ແລະ ສະຖານີ ທີ່ກຳນົດໄວ້;

- ຈັດສັນຈຸດຈອດລົດໃນພື້ນທີ່ ທີ່ມີສະພາບລົດແອອັດ ເປັນຕົ້ນແມ່ນ ໂຮງຮຽນ, ຕະຫຼາດ, ຮ້ານອາຫານ ສຳນັກງານຫ້ອງການ, ຮ້ານຂາຍເຄື່ອງ, ໂຮງແຮມ, ເຮືອນພັກ ແລະ ອື່ນໆ;

- ຈັດສັນບັນດາສະຖານີ (ຄິວລົດ) ລົດໂດຍສານ ເປັນຕົ້ນແມ່ນ ລົດຕູ້, ລົດສອງແຖວ, ລົດແທັກຊີ, ລົດສາມລໍ້ ແລະ ພາຫະນະອື່ນໆ ທີ່ແລ່ນດ້ວຍເຄື່ອງຈັກ.

2. ມ້າງສິ່ງຕໍ່ເຕີມຂອງການກໍ່ສ້າງບໍ່ຖືກຕ້ອງ ກັບແຜນຜັງເມືອງ

- ມ້າງສິ່ງປຸກສ້າງ, ຕໍ່ເຕີມທີ່ບໍ່ໄດ້ຮັບອະນຸຍາດ ບໍ່ສອດຄ່ອງກັບລະບຽບການປຸກສ້າງ;

- ມ້າງ ເຮືອນ, ຮ້ານ, ຕູບ, ຮົ້ວ, ກຳແພງ ທີ່ຊຸດໂຊມ ໃຊ້ການບໍ່ໄດ້ ລວມທັງການກໍ່ສ້າງທີ່ບໍ່ຖືກຕ້ອງກັບແຜນຜັງເມືອງ.

3. ຮື້ຖອນປ້າຍ ແລະ ແຜ່ນໂຄສະນາ ທີ່ຕິດຕັ້ງບໍ່ຖືກຕ້ອງຕາມລະບຽບ

- ຮື້ຖອນປ້າຍ ຕາມຂອບເສັ້ນທາງ, ຈຸດທາງໂຄ້ງ, ທາງແຍກທີ່ມີຄວາມແອອັດ ທີ່ກະທົບເຖິງຄວາມປອດໄພທາງຫຼວງ;

- ຮື້ຖອນປ້າຍ, ການຕິດຕັ້ງປ້າຍຊະຊາຍ (ປ້າຍທີ່ບໍ່ໄດ້ຮັບອະນຸຍາດ) ເຊັ່ນ: ຕາມຝາ, ກຳແພງ, ຕົ້ນໄມ້ ແລະ ເສົາໄຟຟ້າຕາມແຄມທາງ, ເສົາປ້າຍສັນຍານຈະລາຈອນ;

- ຮື້ຖອນປ້າຍທີ່ບໍ່ຮັບປະກັນເຖິງຄວາມປອດໄພ.

4. ແກ້ໄຂສິ່ງກີດຂວາງຕາມທາງຄົນຍ່າງ ແລະ ຕາມພື້ນທີ່ສາທາລະນະ

- ການຈອດລົດຊະຊາຍ, ຈອດລົດຕາມທາງຄົນຍ່າງ, ຈອດລົດຕາມແຄມທາງ ທີ່ບໍ່ໄດ້ຮັບອະນຸຍາດ ການວາງວັດສະດຸກໍ່ສ້າງ, ຕັ້ງລໍ້, ກາງເຕັ້ນຈັດງານ, ວາງເຄື່ອງຂອງ ຫຼື ວາງສິນຄ້າທຸກປະເພດ ຂາຍຢູ່ຕາມທາງຄົນຍ່າງ, ຕາມເສັ້ນທາງສາຍຫຼັກ ແລະ ເຂດສະຫງວນສາທາລະນະແຄມທາງ;

- ຕັດຮອນ, ຕົບແຕ່ງຕົ້ນໄມ້, ງ່າໄມ້ ຕາມແຄມເສັ້ນທາງ ແລະ ສວນສາທາລະນະ;

- ການປ່ອຍສັດລ້ຽງ ຢູ່ຕາມເສັ້ນທາງ ແລະ ເຂດສາທາລະນະ ເປັນຕົ້ນແມ່ນ ງົວ, ຄວາຍ ແລະ ສັດລ້ຽງປະເພດອື່ນໆ.

5. ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນກິດຈະການກໍ່ສ້າງ ແລະ ສ້ອມແປງຕຶກອາຄານ

- ການວາງ ວັດສະດຸ, ອຸປະກອນ, ເຄື່ອງມືກໍ່ສ້າງ ສິ່ງເສດເຫຼືອວັດສະດຸຂອງກິດຈະການກໍ່ສ້າງ-ສ້ອມແປງ ບໍ່ໃຫ້ກະທົບຕໍ່ ທາງຍ່າງ ແລະ ຊ່ອງຈະລາຈອນຂອງລົດ;

- ຕ້ອງມີການນຳໃຊ້ ອຸປະກອນປ້ອງກັນຄວາມປອດໄພ, ອຸປະກອນຮັກສາສິ່ງແວດລ້ອມ;

- ໃຫ້ຖືກຕ້ອງຕາມມາດຕະຖານ-ເຕັກນິກຂອງການກໍ່ສ້າງ ໄດ້ມີການກວດກາ, ຮັບຮອງ ແລະ ຮັບອະນຸຍາດປຸກສ້າງຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຕາມຂໍ້ຕົກລົງສະບັບເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019.

**ມາດຕາ 9: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງອຸດສາຫະກຳ ແລະ ການຄ້າ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງອຸດສາຫະກຳ ແລະ ການຄ້າ ມີດັ່ງນີ້:

- ຈັດສັນບັນດາທີ່ຕັ້ງຂອງໂຮງງານ;
- ຈັດສັນບັນດາຮ້ານຂາຍສິນຄ້າໃນຕະຫຼາດ;
- ຈັດສັນການຊື້-ຂາຍຊະຊາຍ ຕາມແຄມເສັ້ນທາງ, ຂາຍນອກສະຖານທີ່ ທີ່ອະນຸຍາດ;
- ຈັດໝວດສິນຄ້າໃນຕຶກ, ອາຄານຂອງຕະຫຼາດ ຫຼື ສູນການຄ້າ;
- ຈັດວາງການຕິດຕັ້ງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ສອດຄ່ອງຕາມມາດຕະຖານ-ເຕັກນິກທີ່ກຳນົດໄວ້.

**ມາດຕາ 10: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງພະລັງງານ ແລະ ບໍ່ແຮ່**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງພະລັງງານ ແລະ ບໍ່ແຮ່ ມີດັ່ງນີ້:

1. ກວດກາ ເສົາໄຟຟ້າ, ລະບົບສາຍໄຟຟ້າ, ລະບົບໄຟເຍືອງທາງ ຕາມເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງໃນຕົວເມືອງ, ສູນການຄ້າ, ຕະຫຼາດ ແລະ ຊຸມຊົນ;

2. ປັບປຸງການຕໍ່ເສີມ ລະບົບສາຍໄຟຟ້າໃສ່ເສົາທີ່ເກົ່າແກ່ຊຸດໂຊມ.

**ມາດຕາ 11: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງເຕັກໂນໂລຊີ ແລະ ການສື່ສານ ມີດັ່ງນີ້:

1. ກວດກາ ເສົາຮັບ-ສົ່ງສັນຍານ, ລະບົບສາຍໂທລະສັບ, ເຕັກນິກກ້ອງວົງຈອນ - ຈໍ LED ຕາມເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງໃນຕົວເມືອງ, ສູນການຄ້າ, ຕະຫຼາດ ແລະ ຊຸມຊົນ;

2. ກວດກາ ແລະ ດັດສົມ ບັນດາຮ້ານອິນເຕີເນັດຄາເຟ;

3. ປັບປຸງການຕໍ່ເສີມ ສາຍໂທລະສັບໃສ່ເສົາທີ່ເກົ່າແກ່ຊຸດໂຊມ.

**ມາດຕາ 12: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີດັ່ງນີ້:

1. ຈັດສັນສະຖານທີ່ບັນເທີງ, ຮ້ານກິນດື່ມ ແລະ ຄາຣາໂອເກະ ທີ່ບໍ່ສອດຄ່ອງກັບດຳລັດ ວ່າດ້ວຍ ການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 2 ຕຸລາ 2017 ແລະ ມີຄວາມສ່ຽງຕໍ່ການ ມີພຶດຕິກຳ ແລະ ການເຄື່ອນໄຫວ ທີ່ສົ່ງຜົນກະທົບດ້ານລົບຕໍ່ ຄວາມບໍ່ສະຫງົບ, ຄວາມປອດໄພ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ ທີ່ກໍ່ໃຫ້ເກີດການກະທຳທີ່ລາມົກອານາຈານ (ເປັນຕົ້ນໃນເຂດ ໃຈກາງຕົວເມືອງ, ມໍລະດົກວັດທະນະທຳ, ສາສະໜາ, ສຳນັກງານ, ການສຶກສາ ແລະ ອື່ນໆ);

2. ແກ້ໄຂທຸລະກິດບັນເທີງ, ສະຖານທີ່ບັນເທີງ, ຮ້ານອາຫານ ແລະ ຮ້ານກິນດື່ມ ທີ່ສົ່ງສຽງດັງເກີນອັດຕາທີ່ກຳນົດໄວ້ໃນດຳລັດ ວ່າດ້ວຍ ການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 2 ຕຸລາ 2017;

3. ກວດກາຜູ້ທີ່ຈະມາໃຊ້ບໍລິການໃນສະຖານທີ່ບັນເທີງ;

4. ບຸກຄົນ, ນິຕິບຸກຄົນ ສ້າງສຽງດັງເກີນຄວາມຈຳເປັນ ລົບກວນຊຸມຊົນອ້ອມຂ້າງ (ສຽງເສບດົນຕີ).

**ມາດຕາ 13: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີດັ່ງນີ້:

1. ການວາງແຜນຮ່ວມກັບຊຸມຊົນ, ຜູ້ປະກອບການ ກ່ຽວກັບການຄວບຄຸມບັນຫາຂີ້ເຫຍື້ອ ໃນຕົວເມືອງ ແລະ ເສັ້ນທາງຕ່າງໆ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

2. ຄຸ້ມຄອງ, ກວດກາ, ຕິດຕາມ ການດຳເນີນກິດຈະການ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບພະລານາໄມຕໍ່ຊຸມຊົນອ້ອມຂ້າງ ເປັນຕົ້ນ: ນ້ຳເສຍ, ກິ່ນ, ຄວັນ, ຂີ້ຝຸ່ນ, ສານເຄມີ, ແສງ, ສີ, ສຽງ ແລະ ອື່ນໆ...

**ມາດຕາ 14: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງກະສິກຳ ແລະ ປ່າໄມ້**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງກະສິກຳ ແລະ ປ່າໄມ້ ມີດັ່ງນີ້:

1. ຄົ້ນຄວ້າ, ວາງແຜນ ໃນການກ້າເບ້ຍ, ປູກຕົ້ນໄມ້ປະດັບ ໃຫ້ແທດເໝາະກັບສະພາບຕົວເມືອງ;

2. ຄຸ້ມຄອງ, ກວດກາ ການລ້ຽງ ແລະ ປ່ອຍສັດ ແບບຊະຊາຍໃນຕົວເມືອງ ທີ່ສົ່ງຜົນກະທົບຕໍ່ເຂດສາທາລະນະ ແລະ ຜູ້ຢູ່ອາໃສໃກ້ຄຽງ ໂດຍສະເພາະບັນຫາກິ່ນ, ສຽງ ແລະ ອຸບປະຕິເຫດຕາມເສັ້ນທາງ;

3. ຄົ້ນຄວ້າພິຈາລະນາ ຕໍ່ກັບການສະເໜີຕັດຕົ້ນໄມ້ ໃນຕົວເມືອງ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 15: ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງການອື່ນ ທີ່ກ່ຽວຂ້ອງ**

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂະແໜງອື່ນໆ ທີ່ກ່ຽວຂ້ອງ ມີດັ່ງນີ້:

1. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ ແລະ ເມືອງ ປະສານສົມທົບກັບຂະແໜງທີ່ກ່ຽວຂ້ອງ ໃນການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ ຕາມລະບຽບການ ແລະ ກົດໝາຍ ກຳນົດໄວ້ ເປັນຕົ້ນ ບັນຫາການສະກັດກັ້ນອັກຄີໄພ, ການຄຸ້ມຄອງການສັນຈອນໃນທ້ອງຖະໜົນ, ການກວດກາລົດບັນທຸກໜັກເຂົ້າໃນຕົວເມືອງ, ການກວດກາເອກະສານຂອງພາຫະນະຕ່າງໆ, ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ;

2. ຂະແໜງສາທາລະນະສຸກ ຄຸ້ມຄອງ, ກວດກາ ຮ້ານຂາຍຢາປິ່ນປົວສຸຂະພາບ, ຄລີນິກ, ຮ້ານນວດ ໃຫ້ໄດ້ຕາມມາດຕະຖານ ຂອງກະຊວງສາທາລະນະສຸກ;

3. ອົງການກາແດງ ຄຸ້ມຄອງ, ກວດກາ ບັນດາມູນນິທິອາສາກູ້ໄພ ອຸບປະຕິເຫດຕາມທ້ອງຖະໜົນ;

4. ຂະແໜງແຮງງານ ແລະ ສະຫວັດດີການ-ສັງຄົມ ຄຸ້ມຄອງ, ກວດກາ, ຕິດຕາມ ກ່ຽວກັບຄົນຂໍທານ;

5. ອົງການປົກຄອງບ້ານ ແລະ ຄອບຄົວທີ່ກ່ຽວຂ້ອງ ຕ້ອງຄຸ້ມຄອງກ່ຽວກັບບຸກຄົນທີ່ບ້າໃບ້ເສຍຈິດ ຢ່າງເຂັ້ມງວດ.

**ມາດຕາ 16**: ກົນໄກ ແລະ ມາດຕະການ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ

ກົນໄກ ແລະ ມາດຕະການ ກ່ຽວກັບການຈັດສັນຄວາມເປັນລະບຽບຮຽບຮ້ອຍ ມີດັ່ງນີ້:

1. ເປັນເຈົ້າການ ໃນການປະຊາສຳພັນ, ປຸກລະດົມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຮັບຮູ້, ເຂົ້າໃຈ ແລະ ເຊື່ອມຊຶມຄວາມໝາຍຄວາມສຳຄັນ ຂອງການຈັດສັນຄວາມເປັນລະບຽບຮຽບຮ້ອຍ ແລະ ຜົນເສຍຫາຍຂອງການຂາດຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

2. ເຜີຍແຜ່ ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ທີ່ກ່ຽວພັນກັບຂົງເຂດວຽກງານຂອງຕົນ ດ້ວຍຮູບການແຈ້ງການ, ອອກຂໍ້ແນະນຳ, ສ້າງປຶ້ມຄູ່ມື ແລະ ນຳໃຊ້ສື່ມວນຊົນປະເພດຕ່າງໆ ທີ່ກ່ຽວຂ້ອງກັບການແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ;

3. ປະກາດນຳໃຊ້ຂໍ້ຕົກລົງ, ອອກລະບຽບການເພີ່ມຕື່ມ ຕາມຄວາມຈຳເປັນ ແລະ ຄວາມເໝາະສົມ, ອຳນວຍຄວາມສະດວກ ແລະ ຕິດຕາມກວດກາຢ່າງລວມສູນ ຢູ່ບັນດາຕົວເມືອງໃນທົ່ວແຂວງ, ຈັດສັນ ແລະ ລະດົມທຶນ ຮັບໃຊ້ການຈັດຕັ້ງປະຕິບັດ, ແຕ່ງຕັ້ງຄະນະຮັບຜິດຊອບກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

4. ປຸກລະດົມສັງຄົມ ໃຫ້ມີສະຕິ, ມີວິໄນ ແລະ ເສີມຂະຫຍາຍສິດເປັນເຈົ້າຕົນເອງ ຂອງປະຊາຊົນທີ່ດຳລົງຊີວິດໃນຕົວເມືອງ ໃຫ້ເຄົາລົບກົດໝາຍ, ລະບຽບການ. ຕາແສງ, ນາຍບ້ານ, ຫົວໜ້າໜ່ວຍ ຕ້ອງເປັນເຈົ້າການໃນການຈັດສັນຄວາມເປັນລະບຽບຮຽບຮ້ອຍ;

5. ດຳເນີນການທາງລະບຽບການ ແລະ ກົດໝາຍ ຕາມຂະແໜງການຂອງຕົນ ເພື່ອແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍຢ່າງເໝາະສົມ ຕໍ່ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບກົດໝາຍ ແລະ ສ້າງຄວາມບໍ່ເປັນລະບຽບຮຽບຮ້ອຍໃນຂະແໜງການຕ່າງໆ;

6. ສະຫຼຸບລາຍງານໃຫ້ຂັ້ນເທິງຮັບຊາບ ໃນແຕ່ລະໄລຍະ ຢ່າງເປັນປົກກະຕິ.

## ໝວດທີ III
## ຂໍ້ຫ້າມ

**ມາດຕາ 17: ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫ້າມມີພຶດຕິກຳ ດັ່ງນີ້:

1. ດຳເນີນ ການປຸກສ້າງ, ຕໍ່ເຕີມສິ່ງປຸກສ້າງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

2. ຕິດຕັ້ງ, ແຂວນ, ວາງ, ກອງວັດສະດຸ ແລະ ວັດຖຸ ທີ່ກີດຂວາງການຈະລາຈອນ, ລະບົບລະບາຍນ້ຳແຄມທາງ ແລະ ທາງໄຫຼຂອງນ້ຳ, ສຳລັບການຖົມດິນຕາມແຄມທາງ ຕ້ອງຫຼຸດຈາກໜ້າທາງຢ່າງໜ້ອຍ 5 ຊັງຕີແມັດ;

3. ຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອຕ່າງໆ ຊະຊາຍຕາມສະຖານທີ່ສາທາລະນະ ແລະ ທີ່ຢູ່ອາໃສ;

4. ຈອດລົດໄວ້ຕາມເສັ້ນທາງ ເກີນ 30 ນາທີ, ນັບແຕ່ເວລາ 12:00 ໂມງກາງຄືນ ຫາ 6:00 ໂມງເຊົ້າ;

5. ລົດບັນທຸກໜັກເຂົ້າໃນຕົວເມືອງ, ໃນກໍລະນີຈະແກ່ເຄື່ອງ ຫຼື ສິນຄ້າ ເຂົ້າໃນຕົວເມືອງ ຕ້ອງນຳໃຊ້ລົດບັນທຸກທີ່ມີຈຳນວນບໍ່ເກີນ 6 ລໍ້ (ຍົກເວັ້ນທາງຫຼວງແຫ່ງຊາດ);

6. ຈູດດອກໄມ້ໄຟ, ບັ້ງກະໂພກ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ;

7. ເປີດສຽງເພງໃນຮ້ານບັນເທີງ ແລະ ງານສັງສັນຕ່າງໆ ພາຍຫຼັງ 23:00 ໂມງ ຈົນຮອດ 6:00 ໂມງເຊົ້າ;

8. ປຸກສ້າງ ສະຖານທີ່ບັນເທີງ ໃກ້ກັບສະຖານທີ່ການສຶກສາ, ສຳນັກງານຂອງລັດ, ໂຮງໝໍ, ສຸກສາລາ, ສະຖານທີ່ສາສະໜາຕ່າງໆ ໃນໄລຍະ 500 ແມັດ ຢ່າງເດັດຂາດ;

9. ວາງຂາຍເຄື່ອງທຸກປະເພດ ໃສ່ໃນເຂດທາງຍ່າງຕາມແຄມທາງ ໂດຍບໍ່ໄດ້ຮັບອະນຸຍາດ;

10. ຕິດຕັ້ງ ປ້າຍໂຄສະນາ, ປ້າຍບອກສະຖານທີ່ ຊະຊາຍຕາມສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ;

11. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບ ພະນັກງານ, ເຈົ້າໜ້າທີ່ກ່ຽວຂ້ອງ ຫຼື ຜູ້ປະກອບການອື່ນໆ ໃນການດຳເນີນກິດຈະການ ທີ່ສ້າງຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ.

**ມາດຕາ 18: ຂໍ້ຫ້າມສຳລັບ ພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ**

ພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຫ້າມມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການອອກໃບອະນຸຍາດ ແລະ ໃບຢັ້ງຢືນຕ່າງໆ ທີ່ຂັດຕໍ່ລະບຽບການໄດ້ກຳນົດ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ໃນການຕິດຕາມກວດກາ ການດຳເນີນກິດຈະການ ທີ່ກ່ຽວກັບຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ.

## ໝວດທີ IV

## ອົງການຫຼັກ ໃນການຄຸ້ມຄອງ, ກວດກາ ແລະ ການປະເມີນຜົນ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ

**ມາດຕາ 19: ອົງການຫຼັກ ໃນການຄຸ້ມຄອງ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ**

ອົງການຫຼັກ ໃນການຄຸ້ມຄອງ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ປະກອບມີດັ່ງນີ້:

1. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ;

2. ຫ້ອງການໂຍທາທິການ ແລະ ຂົນສົ່ງ ປະຈຳເມືອງ;

3. ອົງການປົກຄອງຂັ້ນຕໍ່າສຸດຂອງລັດ.

**ມາດຕາ 20: ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ**

ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ມີດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນແມ່ບົດ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;

2. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

3. ປຸກຈິດສຳນຶກໃຫ້ປະຊາຊົນ ແລະ ສັງຄົມ ປະກອບສ່ວນເຂົ້າໃນວຽກງານການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

4. ຂຶ້ນແຜນ ແລະ ນຳໃຊ້ງົບປະມານ ເຂົ້າໃນການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນກ່ຽວກັບ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

6. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 21: ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ປະຈຳເມືອງ**

ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ປະຈຳເມືອງ ມີດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

2. ປູກຈິດສຳນຶກໃຫ້ປະຊາຊົນທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ, ປະກອບສ່ວນເຂົ້າໃນວຽກງານການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

3. ຂຶ້ນແຜນ ແລະ ນຳໃຊ້ງົບປະມານ ເຂົ້າໃນການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

4. ປະສານສົມທົບ ກັບ ຫ້ອງການທີ່ກ່ຽວຂ້ອງຂອງເມືອງ ແລະ ອົງການປົກຄອງຂັ້ນຕໍ່າສຸດຂອງລັດ ເພື່ອພິຈາລະນາແກ້ໄຂ ບັນຫາທີ່ເກີດຂຶ້ນ ໃນການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 22: ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນຕໍ່າສຸດຂອງລັດ**

ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນຕໍ່າສຸດຂອງລັດ ມີດັ່ງນີ້:

1. ໂຄສະນາເຜີຍແຜ່, ຕິດຕາມ, ກວດກາ, ຈັດຕັ້ງປະຕິບັດ ພາຍໃນອົງການປົກຄອງຂັ້ນຕໍ່າສຸດຂອງລັດ;

2. ປຸກລະດົມປະຊາຊົນ ໃຫ້ມີສ່ວນຮ່ວມ ໃນການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງພາຍໃນອົງການປົກຄອງຂັ້ນຕໍ່າສຸດຂອງລັດ;

3. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ.

**ມາດຕາ 23: ອົງການກວດກາ**

ອົງການກວດກາ ປະກອບມີດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັບອົງການຄຸ້ມຄອງ;

2. ອົງການກວດກາພາຍນອກ ປະກອບມີ: ສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການຈັດຕັ້ງມະຫາຊົນ ແຂວງ ແລະ ເມືອງ.

**ມາດຕາ 24: ເນື້ອໃນກວດກາ**

ເນື້ອໃນກວດກາ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ;

2. ການຈັດຕັ້ງປະຕິບັດໜ້າທີ່ ຂອງພະນັກງານຮັບຜິດຊອບ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ.

**ມາດຕາ 25: ຮູບການກວດກາ**

ຮູບການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມປົກກະຕິ ແມ່ນການກວດກາຕາມແຜນ ທີ່ມີລັກສະນະກວດກາເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາ ແບບກະທັນຫັນ ແມ່ນການກວດກາເມື່ອເຫັນວ່າ ມີຄວາມຈໍາເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດກາ ທຸກກໍລະນີ ຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍ.

**ມາດຕາ 26: ການປະເມີນຜົນ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ຕ້ອງເປັນເຈົ້າການ ໃນການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ພາຍໃນແຂວງຄໍາມ່ວນ ແລະ ສະເໜີການນໍາຂອງແຂວງ ພິຈາລະນາໃນການປັບປຸງຂໍ້ຕົກລົງສະບັບດັ່ງກ່າວ ທຸກ ສາມປີ ຫາ ຫ້າປີ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງຕົວເມືອງ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27: ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຜົນງານປະກອບສ່ວນ ເຂົ້າໃນວຽກງານ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 28: ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ໂດຍສະເພາະຂໍ້ຫ້າມ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ແລະ ດໍາເນີນຄະດີຕາມກົດໝາຍ ຕາມສະຖານໜັກ ຫຼື ເບົາ.

ການປະຕິບັດມາດຕະການຕໍ່ຜູ້ລະເມີດ ແມ່ນຂະແໜງການທີ່ກ່ຽວຂ້ອງໃນຂໍ້ຕົກລົງສະບັບນີ້ ສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ ແລະ ເມືອງ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 29: ການຈັດຕັ້ງປະຕິບັດ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ເປັນເຈົ້າການໃນການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30: ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ເຈົ້າແຂວງ**

ວັນໄຊ ພອງສະຫວັນ